# ບົດກ່າວປິດ

## ຂອງ ທ່ານ ສຸຣິວັດ ຮອງລັດຖະມົນຕີ, ກະຊວງການເງິນ

## ໃນກອງປະຊຸມປະທານ ແລະປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ

## ໃນວັນທີ 18 ກໍລະກົດ 2025, ທີ່ ນະຄອນຫຼວງວຽງຈັນ

ຮຽນ: - ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ! ທີ່ນັບຖືຢ່າງສູງ,

- ບັນດາ ທ່ານ ຮອງລັດຖະມົນ / ຮອງປະທານ ! ທີ່ເຄົາລົບ ແລະ ນັບຖື,
- ບັນດາ ທ່ານ ຫົວໜ້າ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຫົວໜ້າພະແນກ/ຮອງຫົວໜ້າພະແນກ, ຜູ້ຕາງໜ້າຈາກກະຊວງ/ຂະແໜງ ການ ! ທີ່ຮັກແພງ ;
- ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ມີສຳນັກງານ-ຫ້ອງການ ຕັ້ງຢູ່ ສປປ ລາວ, ຢູ່ ຮ່າໂນຍ ສສ ຫວຽດນາມ ແລະ ບາງກອກ ປະເທດໄທ ທີ່ນັບຖື;

**ບັນດາທ່ານແຂກທີ່ມີກຽດ ທີ່ເຂົ້າຮ່ວມທາງອອນລາຍ ແລະອອບລາຍ, ທ່ານ ຍິງ ແລະທ່ານຊາຍ !**

ມາຮອດນີ້, ກອງປະຊຸມຂອງພວກເຮົາ ກໍ່ໃກ້ຈະປິດລົງແລ້ວ, ຂ້າພະເຈົ້າຕາງໜ້າ ໃຫ້ຄະນະປະທານອີກເທື່ອໜຶ່ງ ສະແດງຄວາມຂອບໃຈ ແລະ ຊົມເຊີຍ ມາຍັງບັນດາທ່ານ ຮອງລັດຖະມົນຕີ, ຫົວໜ້າ/ຮອງຫົວໜ້າຫ້ອງການ, ຫົວໜ້າ/ຮອງຫົວໜ້າກົມ, ຜູ້ຕາງໜ້າຈາກກະຊວງ/ຂະແໜງການ, ທ່ານ ເອກອັກຄະລັດຖະທູດ, ຕ່າງໜ້າຈາກສະຖານເອກອັກຄະລັດຖະທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະຜູ້ແທນກອງປະຊຸມ ທຸກໆທ່ານ ທີ່ໄດ້ ປະກອບຄຳເຫັນໃນທີ່ມີເນື້ອໃນອັນສຳຄັນ; ເຊິ່ງບັດດາຄຳຄິດເຫັນດັ່ງກ່າວມີປະໂຫຍດສຳຄັນ ເພື່ອເປັນເອກະພາບໃນການກະກຽມຄວາມພ້ອມໃຫ້ແກ່ການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025.

ຜ່ານການຮັບຟັງການປຶກສາຫາລື ແລະປະກອບຄຳເຫັນ ໃນກອງປະຊຸມມື້ນີ້ ເຫັນວ່າ: ມີຫຼາຍຄວາມຄິດເຫັນ ເຊິ່ງພວກເຮົາຈະໄດ້ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ລວມທັງ ຮ່າງແນວຄວາມຄິດຂອງ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ທີ່ເປັນວຽກທີ່ສຳຄັນ ຂອງການພັດທະນາ ສປປ ລາວ ໂດຍຈະໄດ້ມີການເຊື່ອມສານ ການກະກຽມ ແລະ ເສີມຂະຫຍາຍການເຮັດວຽກຮ່ວມກັນ ໃນກົນໄກຂອງຂະບວນການໂຕະມົນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ໂດຍສະເພາະບັນດາກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລື ກັບຄູ່ຮ່ວມ

ພັດທະນາ ເຊິ່ງມີບົດບາດສຳຄັນ ໃນການປະກອບສ່ວນເຂົ້າໃນວຽກງານຂະບວນການໂຕະມົນ, ດັ່ງນັ້ນ, ຂ້າພະເຈົ້າຂໍເນັ້ນໜັກ ບາງຈຸດເພີ່ມຕື່ມດັ່ງນີ້:

- ສະເໜີໃຫ້ ກົມແຜນການ ກະຊວງການເງິນ ສືບຕໍ່ປັບປຸງຮ່າງສະບັບທີ 5 ຂອງ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງຍຸດທະສາດດ້ານການເງິນ ແລະ ກອບການຕິດຕາມ - ປະເມີນຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ສາມາດຮັບຮອງໂດຍພື້ນຖານ ໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ;
- ສະເໜີໃຫ້ ກົມຮ່ວມມື ແລະ ການເງິນສາກົນ ຮ່າງລາຍງານຄວາມຄືບໜ້າໃນການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ພ້ອມທັງແຈ້ງໃຫ້ຊາບກ່ຽວກັບການຈັດກອງປະຊຸມສົນທະນາລະດັບສູງ ເພື່ອນຳຜົນຂອງກອງປະຊຸມດັ່ງກ່າວ ມານຳສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ໃຫ້ຄະນະຊີ້ນຳລະດັບຊາດ ຊາບ
- ສະເໜີໃຫ້ ກົມຮ່ວມມື ແລະ ການເງິນສາກົນ ດຳເນີນການຮັບຮອງຖະແຫຼງການວຽງຈັນ ສະບັບທີ III ໃຫ້ສາມາດໄດ້ເຊັນຮັບຮອງໄດ້ໃນກອງປະຊຸມດັ່ງກ່າວດ້ວຍ ;
- ສະເໜີໃຫ້ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນ 2024 ທີ່ຜ່ານມາ ແລະ ການປະກອບສ່ວນຂອງໜ່ວຍງານຂະແໜງການ ຕໍ່ການຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ກໍ່ຄືປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2025 ແລະ ແຜນປີ 2026.

**ບັນດາທ່ານແຂກທີ່ມີກຽດ !**

ຂ້າພະເຈົ້າຂໍຍ້ຳຄືນອີກວ່າ : ໂດຍຕາງໜ້າໃຫ້ລັດຖະບານ ສປປ ລາວ ກໍ່ຄື ກະຊວງການເງິນ ຂໍຖືໂອເກາດພິເສດນີ້ ຮຽນເຊີນ ບັນດາການນຳຂັ້ນສູງ, ບັນດາທ່ານເອກະອັກຄະລັດຖະທູດ, ຫົວໜ້າອົງການຈັດຕັ້ງສາກົນ ທີ່ມີຫ້ອງການປະຈຳ ສປປ ລາວ ແລະ ບໍ່ມີຫ້ອງການ ປະຈຳ ສປປ ລາວ ມາເຂົ້າຮ່ວມກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ທີ່ຈະໄດ້ຈັດຂຶ້ນໃນວັນທີ 18 – 20 ພະຈິກ 2025 ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ ດ້ວຍ.

ຂ້າພະເຈົ້າ ຕີລາຄາສູງ ແລະ ຊົມເຊີຍຕໍ່ກອງປະຊຸມຂອງພວກເຮົາໃນມື້ນີ້ ທີ່ໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດຟື້ນ, ມີການແລກປ່ຽນຄຳຄິດຄຳເຫັນຢ່າງມີສີສັນ ເຕັມໄປດ້ວຍເນື້ອໃນອັນຄົບຖ້ວນ ແລະ ປະສົບຜົນສຳເລັດຢ່າງຈົບງາມ.

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ທ່ານ ບັກໂຄເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການສະຫະປະຊາຊາດ ປະຈໍາ ສປປ ລາວ ແລະຜູ້ແທນກອງປະຊຸມທຸກທ່ານ ທີ່ໄດ້ສະຫລະເວລາອັນມີຄຸນຄ່າຂອງ ທ່ານ ເຂົ້າຮ່ວມໃນກອງປະຊຸມ ທີ່ສໍາຄັນໃນຄັ້ງນີ້.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດໃຫ້ ທ່ານປະທານຮ່ວມ ແລະບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມ ທັງໝົດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມເບີກບານມ່ວນຊື່ນ ແລະປະສົບຜົນສໍາເລັດອັນຫຍິ່ງໃຫຍ່ ໃນໜ້າທີ່ວຽກງານຂອງບັນດາທ່ານ.

ນະໂອກາດນີ້ ຂ້າພະເຈົ້າຂໍກ່າວປິດ ກອງປະຊຸມນັບແຕ່ເວລານີ້ເປັນຕົ້ນໄປ.

**ຂໍຂອບໃຈ !**